**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ

ເວລາ........
ວັນທີເຂົ້າ 23/6/2021
ເລກທີເຂົ້າ 1850
ສົ່ງເຖິງ........

ນາຍົກລັດຖະມົນຕີ

ເລກທີ 59 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 15.06.2021

**ຂໍ້ຕົກລົງ**

**ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19**

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ກົດໝາຍ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ ສະບັບເລກທີ 34/ສພຊ, ລົງວັນທີ 09 ພະຈິກ 2017.
- ອີງຕາມບົດລາຍງານຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 477/ຫສນຍ, ລົງວັນທີ 11 ມິຖຸນາ 2021.

**ນາຍົກລັດຖະມົນຕີ ຕົກລົງ :**

ມາດຕາ 1 **ແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ດັ່ງມີລາຍຊື່ລຸ່ມນີ້ :**

1. ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ — ເປັນຫົວໜ້າ;
2. ທ່ານ ດຣ. ບຸນແຝງ ພູມມະໄລສິດ, ລັດຖະມົນຕີ ກະຊວງສາທາລະນະສຸກ — ເປັນຮອງຫົວໜ້າ;
3. ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ເປັນຮອງຫົວໜ້າ; ແລະ ຜູ້ປະຈຳການ;
4. ທ່ານ ດຣ. ສະໜອງ ທອງຊະນະ, ຮອງລັດຖະມົນຕີ ກະຊວງສາທາລະນະສຸກ — ເປັນຮອງຫົວໜ້າ;
5. ທ່ານ ພົຕ ວົງຄຳ ພົມມະກອນ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ — ເປັນກຳມະການ;
6. ທ່ານ ບຸນເຫຼືອ ພັນດານຸວົງ, ຮອງລັດຖະມົນຕີ ກະຊວງການຕ່າງປະເທດ — ເປັນກຳມະການ;
7. ທ່ານ ພົຕ. ປອ. ທອງເຫຼັກ ມັງໜໍ່ເມກ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ — ເປັນກຳມະການ;
8. ທ່ານ ນ. ຂັນທະລີ ສິຣິພົງພັນ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ — ເປັນກຳມະການ;
9. ທ່ານ ອຸ່ນທອງ ຂາວພັນ, ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ — ເປັນກຳມະການ;
10. ທ່ານ ນາງ ພອນວັນ ອຸດທະວົງ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ — ເປັນກຳມະການ;
11. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີ ກະຊວງການເງິນ — ເປັນກຳມະການ;
12. ທ່ານ ບຸນຂວາງ ຄຳບຸນເຮືອງ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ — ເປັນກຳມະການ;

13.ທ່ານ ສົມຈິດ ອິນທະມິດ, ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;

14.ທ່ານ ລັນ ແສງອາພອນ, ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;

15.ທ່ານ ປະເດີມພອນ ສິນທະນີ, ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;

16.ທ່ານ ປອ. ສັນຕິສຸກ ສິມມາລາວົງ, ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ;

17.ທ່ານ ຈັນທະວົງ ແສນອາມາດມົນຕີ, ຮອງປະທານສູນກາງແນວລາວສ້າງຊາດ ເປັນກຳມະການ;

18.ທ່ານ ນ. ອາລີຍາວັນ ອັກຄະວົງ, ຮອງປະທານ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;

19.ທ່ານ ນ. ບົວຈັນ ສີຫານາດ, ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;

20.ທ່ານ ນອນທອງ ສຸວັນນີໄຊ, ຮອງເລຂາ ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;

**ມາດຕາ 2** ຄະນະສະເພາະກິດດັ່ງກ່າວ ມີໜ້າທີ່ ດັ່ງນີ້ :

- ຊີ້ນຳ, ປຸກລະດົມ ແລະ ຊຸກຍູ້ ທຸກການຈັດຕັ້ງຂອງພັກ-ລັດ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນເອກະຊົນ, ອົງການຈັດຕັ້ງສາກົນທີ່ເຄື່ອນໄຫວ ໃນ ສປປ ລາວ ຕະຫຼອດຮອດທົ່ວສັງຄົມ ເຂົ້າຮ່ວມ ແລະ ເປັນເຈົ້າການ ໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ພ້ອມທັງ ຕິດຕາມ, ກວດກາ ແລະ ປະເມີນສະພາບການຂອງແຕ່ລະໄລຍະ ຢ່າງໃກ້ຊິດ ແລ້ວລາຍງານໃຫ້ລັດຖະບານຮັບຊາບ ເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນເວລາ.
- ແຕ່ງຕັ້ງຄະນະຜູ້ຊ່ວຍວຽກຂອງຕົນ ເພື່ອເປັນເສນາທິການໃຫ້ແກ່ຂັ້ນເທິງ ໃນການລົງເລິກຄົ້ນຄວ້າມາດຕະການ, ວິທີການຕ່າງໆທີ່ເໝາະສົມ ແລະ ເປັນໃຈກາງໃນການພົວພັນປະສານງານກັບຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ບັນດາປະເທດໃກ້ຄຽງ, ຄູ່ຮ່ວມພັດທະນາ ແລະ ທຸກພາກສ່ວນໃນສັງຄົມ ກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຕາມແຕ່ລະກໍລະນີ ແລະ ຄົ້ນຄວ້າໃຫ້ທັດສະນະ ເພື່ອລາຍງານຂັ້ນເທິງ ພິຈາລະນາ.

**ມາດຕາ 3** ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

**ມາດຕາ 4** ສຳລັບງົບປະມານຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕ່າງໆຂອງຄະນະດັ່ງກ່າວ ແມ່ນນຳໃຊ້ງົບປະມານຂອງລັດຖະບານ, ການປະກອບສ່ວນຂອງສັງຄົມ ແລະ ອົງການຈັດຕັ້ງສາກົນຕ່າງໆ ແລະ ບົນພື້ນຖານລະບຽບການຕ່າງໆ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 5** ຂໍ້ຕົກລົງກ່ອນສະບັບນີ້ ລ້ວນແຕ່ລົບລ້າງ ແລະ ຂໍ້ຕົກລົງ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ